# ຜູ້ລອດຊີວິດຈາກການໃຊ້ຄວາມຮຸນແຮງໃນຄອບຄົວ: ການສະໝັກຂໍການຄຸ້ມຄອງສຸຂະພາບ

ທ່ານກຳລັງໃຊ້ຊີວິດກັບ ຫຼື ຫຼົບໜີຈາກເຫດການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ມີບັນຫາໃນການສະໝັກຂໍການດູແລເບິ່ງແຍງສຸຂະພາບບໍ? ຄູ່ມືຂໍ້ມູນນີ້ຈະໃຫ້ການຊ່ວຍເຫຼືອແກ່ທ່ານໃນການສະໝັກຂໍການຄຸ້ມຄອງສຸຂະພາບໃນ Washington Healthplanfinder.

## ຂ້າພະເຈົ້າຈະສະໝັກຂໍການຄຸ້ມຄອງສຸຂະພາບຜ່ານ Washington Healthplanfinder ໄດ້ແນວໃດ?

- ອອນລາຍ: ເຂົ້າເບິ່ງ Washington Healthplanfinder ທີ່ **wahealthplanfinder.org**
- ໂທລະສັບ: ໂທຫາຝ່າຍຊ່ວຍເຫຼືອລູກຄ້າທີ່ 1-855-923-4633
- ເຈ້ຍ: **ຍື່ນແບບສະໝັກສຳລັບການຄຸ້ມຄອງດູແລເບິ່ງແຍງສຸຂະພາບ (HCA 18-001P)**
- ສ່ວນບຸກຄົນ: ແຫຼ່ງຊ່ວຍເຫຼືອໃນທ້ອງຖິ່ນທີ່ສາມາດໃຫ້ທ່ານສະໝັກຂໍການຄຸ້ມຄອງສຸຂະພາບ ໂດຍບໍ່ມີຄ່າໃຊ້ຈ່າຍເພີ່ມເຕີມ
  - **ຜູ້ຊີ້ນຳ ຫຼື ຜູ້ຊ່ວຍເຫຼືອຂັ້ນເຜີ່ຂອງ Washington Healthplanfinder**

## ຂ້າພະເຈົ້າຈະສາມາດສະໝັກຂໍການຄຸ້ມຄອງຜ່ານ Washington Healthplanfinder ໄດ້ເມື່ອໃດ?

ຖ້າທ່ານກຳລັງໃຊ້ຊີວິດກັບ ຫຼື ຫຼົບໜີຈາກເຫດການໃຊ້ຄວາມຮຸນແຮງໃນຄອບຄົວ, ທ່ານສາມາດສະໝັກຂໍການຄຸ້ມຄອງສຸຂະພາບໄດ້ຕະຫຼອດເວລາໝົດປີ. ບໍ່ມີຂໍ້ຈຳກັດໃນເສັ້ນເວລາ, ເຊັ່ນ: ລະຫວ່າງການລົງທະບຽນແບບເປີດ.

## ຈະເຮັດແນວໃດ ຖ້າຂ້າພະເຈົ້າລົງທະບຽນໃນການຄຸ້ມຄອງສຸຂະພາບໃນປັດຈຸບັນຜ່ານ Washington Healthplanfinder ພ້ອມກັບຜູ້ຂົ່ມເຫັງຂ້າພະເຈົ້າ ແລະ ຕ້ອງການສະໝັກຂໍການຄຸ້ມຄອງດ້ວຍຕົນເອງ?

ເພື່ອຕື່ມຂໍ້ມູນໃສ່ແບບສະໝັກດ້ວຍຕົວທ່ານເອງ, ທ່ານຈຳເປັນຕ້ອງຖືກລຶບອອກຈາກການສະໝັກທີ່ທ່ານຮ່ວມໃຊ້ກັບຜູ້ຂົ່ມເຫັງຂອງທ່ານ. ເພື່ອດຳເນີນການເຊັ່ນນີ້, ກະລຸນາໂທຫາໜຶ່ງໃນສູນບໍລິການລູກຄ້າທີ່ລະບຸລາຍຊື່ຢູ່ຂ້າງລຸ່ມ ອີງໃສ່ການຄຸ້ມຄອງ.

**ການຄຸ້ມຄອງຂອງ Washington Apple Health (Medicaid):**

- ອົງການດູແລເບິ່ງແຍງສຸຂະພາບ: ຕິດຕໍ່ຕົວແທນພື້ນທີ່ HCA ໃນທ້ອງຖິ່ນຂອງທ່ານທີ່ **hca.wa.gov/assets/free-or-low-cost/area_representatives.pdf**

**ແຜນປະກັນສຸຂະພາບທີ່ຜ່ານເງື່ອນໄຂ:**

- ສະຖານແລກປ່ຽນສິດທິປະໂຫຍດສຸຂະພາບ: 1-855-923-4633

***ຂໍ້ຄວນລະວັງ:*** ຜູ້ຂົ່ມເຫັງຂອງທ່ານຈະໄດ້ຮັບແຈ້ງການທາງອີເມວ ຫຼື ຈົດໝາຍທີ່ລະບຸວ່າມີການປ່ຽນແປງສຳລັບການສະໝັກທີ່ຖືກແບ່ງປັນ. ແຈ້ງການຈະຖືກສົ່ງໃຫ້ໄວສຸດໃນມື້ຖັດໄປ.

## ຂ້າພະເຈົ້າຈະສາມາດລົງທະບຽນໃນການຄຸ້ມຄອງສຸຂະພາບແຍກຈາກຜົວເມຍຂອງຂ້າພະເຈົ້າທີ່ເປັນຜູ້ຂົ່ມເຫັງຂອງຂ້າພະເຈົ້າບໍ?

ແມ່ນ. ຖ້າທ່ານແຕ່ງງານ, ຢ່າຮ້າງ ຫຼື ຢູ່ໃນຄວາມສຳພັນຄູ່ຮ່ວມອາໄສທີ່ຂຶ້ນທະບຽນກັບຜູ້ຂົ່ມເຫັງຂອງທ່ານ, ທ່ານສາມາດລົງທະບຽນໃນການຄຸ້ມຄອງສຸຂະພາບແຍກ. ໃນການສະໝັກຂອງ Washington Healthplanfinder, ເມື່ອມີການຮ້ອງຂໍໃຫ້ທ່ານສະແດງສະຖານະການຍື່ນອາກອນຂອງທ່ານ, ກະລຸນາລະບຸວ່າທ່ານຍື່ນ "ອາກອນປະເພດດ່ຽວ". ແນວທາງຂອງລັດຖະບານກາງໄດ້ລະບຸວ່າທ່ານສາມາດເຮັດເຊັ່ນນີ້ໂດຍບໍ່ຕ້ອງຢ້ານວ່າຈະຖືກລົງໂທດຈາກ IRS.

*(ສືບຕໍ່)*

## ຂໍ້ມູນທີ່ຂ້າພະເຈົ້າສະໜອງໃຫ້ໃນການສະໝັກໃໝ່ຂອງຂ້າພະເຈົ້າຈະຖືກແບ່ງປັນກັບຜູ້ຂົ່ມເຫັງຂອງຂ້າພະເຈົ້າບໍ?

ບໍ່. ການສະໝັກຂອງທ່ານຈະຖືກຮັກສາໄວ້ເປັນຄວາມລັບ ແລະ ຂໍ້ມູນຂອງທ່ານຈະບໍ່ຖືກແບ່ງປັນກັບພາກສ່ວນທີສາມ ໂດຍບໍ່ມີການຍິນຍອມເປັນລາຍລັກອັກສອນຈາກທ່ານ.

## ຈະເຮັດແນວໃດ ຖ້າຂ້າພະເຈົ້າບໍ່ສາມາດໃຫ້ໝາຍເລກປະກັນສັງຄົມຂອງຂ້າພະເຈົ້າ ຫຼື ຂອງລູກຂ້າພະເຈົ້າ ເນື່ອງຈາກການໃຊ້ຄວາມຮຸນແຮງໃນຄອບຄົວ?

- ສຳລັບ Washington Apple Health (Medicaid), ທ່ານສາມາດລະເວັ້ນເງື່ອນໄຂນີ້.
- ສຳລັບແຜນປະກັນສຸຂະພາບທີ່ຜ່ານເງື່ອນໄຂ, ທ່ານອາດໄດ້ຮັບເວລາ 90 ມື້ເພື່ອໃຫ້ຢືນຢັນເງື່ອນໄຂສິດ. ຖ້າທ່ານສາມາດສະແດງຄວາມສຸດຈະລິດໃຈໃນການຢືນຢັນ, ທ່ານອາດໄດ້ຮັບເວລາເພີ່ມ.

## ຈະເຮັດແນວໃດ ຖ້າຂ້າພະເຈົ້າບໍ່ສາມາດເຂົ້າເຖິງຫຼັກຖານສະຖານະຄວາມເປັນພົນລະເມືອງ ຫຼື ການເຂົ້າເມືອງຂອງຂ້າພະເຈົ້າ?

ຖ້າບໍ່ສາມາດຢືນຢັນສະຖານະຄວາມເປັນພົນລະເມືອງ ຫຼື ການເຂົ້າເມືອງຂອງທ່ານຜ່ານ Washington Healthplanfinder, ທ່ານຈຳເປັນຕ້ອງໃຫ້ເອກະສານເພີ່ມເຕີມ. ທ່ານອາດໄດ້ຮັບເວລາສູງເຖິງ 90 ມື້ສຳລັບເງື່ອນໄຂສິດ.

## ຂ້າພະເຈົ້າຈະໝັກຂໍການຄຸ້ມຄອງສຸຂະພາບໄດ້ແນວໃດ ຖ້າໝາຍເລກປະກັນສັງຄົມ ແລະ/ຫຼື ຊື່ຂອງຂ້າພະເຈົ້າ ຫຼື ຂອງລູກຂ້າພະເຈົ້າມີການປ່ຽນແປງ?

ຖ້າບໍ່ສາມາດຢືນຢັນໝາຍເລກປະກັນສັງຄົມ ແລະ/ຫຼື ຊື່ໄດ້ຜ່ານ Washington Healthplanfinder, ທ່ານຈະຖືກຮ້ອງຂໍໃຫ້ສະແດງເອກະສານເພີ່ມເຕີມ.

## ຂ້າພະເຈົ້າເຂົ້າຮ່ວມໃນໂຄງການຮັກສາຄວາມລັບຂອງທີ່ຢູ່ (ACP). ຂ້າພະເຈົ້າຈະສາມາດສະໝັກຂໍການຄຸ້ມຄອງສຸຂະພາບຜ່ານ Washington Healthplanfinder ບໍ?

ແມ່ນ. ປ້ອນໝາຍເລກຕູ້ໄປສະນີ ACP PO ຂອງທ່ານເປັນ "ທີ່ຢູ່ເຮືອນ" ຂອງທ່ານ. ຫຼັງຈາກທີ່ທ່ານປ້ອນລະຫັດໄປສະນີຂອງທ່ານ, ຈະມີກ່ອງສະແດງຂຶ້ນ ແລ້ວຮ້ອງຂໍ "ໝາຍເລກ ACP" ຂອງທ່ານ – ໃຫ້ປ້ອຍໝາຍເລກ PMB ຫຼື ID ຂອງທ່ານທີ່ມອບໝາຍໃຫ້ໂດຍໂຄງການຮັກສາຄວາມລັບຂອງທີ່ຢູ່.

***ສຳຄັນ:*** ຖ້າທ່ານເຂົ້າຮ່ວມໃນໂຄງການຮັກສາຄວາມລັບຂອງທີ່ຢູ່ (ACP) ແລະ ຖືກອະນຸມັດໃຫ້ຮັບ Washington Apple Health, ທ່ານຈະລົງທະບຽນເຂົ້າຮັບການບໍລິການໃນ ເຂດປົກຄອງເທີສຕັນໂດຍອັດຕະໂນມັດ.

ຖ້າມັນບໍ່ສະດວກສຳລັບທ່ານ, ກະລຸນາຕິດຕໍ່ຜູ້ໃຫ້ບໍລິການດູແລເບິ່ງແຍງສຸຂະພາບທີ່ຢູ່ໃນການຄຸ້ມຄອງຂອງທ່ານໃນຊ່ວງທຳອິດຂອງເດືອນທີ່ທ່ານລົງທະບຽນ. ທ່ານຈະສາມາດເລືອກ ຜູ້ໃຫ້ບໍລິການດູແລເບິ່ງແຍງຫຼັກ (PCP) ໃນພື້ນທີ່ທີ່ທ່ານຢູ່ອາໄສ. ການສອບຖາມອາດຖືກສົ່ງໄປຫາອົງການດູແລເບິ່ງແຍງສຸຂະພາບທີ່ 1-800-562-3022 (ຕໍ່ 16131)

### ຕິດຕໍ່ພວກເຮົາ

ຄຳຖາມກ່ຽວກັບໂຄງການດັ່ງຕໍ່ໄປນີ້ອາດຖືກສົ່ງໄປຫາສູນບໍລິການລູກຄ້າທີ່ລະບຸຊື່ຢູ່ຂ້າງລຸ່ມ:

**ການຄຸ້ມຄອງຂອງ Washington Apple Health (Medicaid):**
ອົງການດູແລເບິ່ງແຍງສຸຂະພາບ: ຕິດຕໍ່ຕົວແທນພື້ນທີ່ HCA ໃນທ້ອງຖິ່ນຂອງທ່ານທີ່
**hca.wa.gov/assets/free-or-low-cost/area_representatives.pdf**

**ແຜນປະກັນສຸຂະພາບທີ່ຜ່ານເງື່ອນໄຂ:**
ສະຖານແລກປ່ຽນສິດທິປະໂຫຍດທາງສຸຂະພາບ: 1-855-923-4633

**ໂຄງການຮັບສາຄວາມລັບຂອງທີ່ຢູ່:**
ລັດຖະມົນຕີວ່າດ້ວຍກະຊວງການຕ່າງປະເທດ: 1-800-822-1065